# ຄູ່ມືແນະນຳ ແລະ ການນຳໃຊ້

## ແນວພັນສາລີເຂົ້າໜຽວຄຳ 1



ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນບົດ
ອົງການອອກຟາມ
ພະແນກກະສິກຳ ແລະ ປ່າໄມ້

# ປະຫວັດຂອງແນວພັນ

ແນວພັນສາລີເຂົ້າໜຽວຄຳ 1 ແມ່ນ **ທ່ານ ຄຳມີໄຊ ຈັນທະລາ** ໄດ້ປັບປຸງພັນຢູ່ບ້ານທ່າຫີນ,ເມືອງສາມັກຄີໄຊ,ແຂວງອັດຕະປື ລະດູຝົນ2019-ລະດູແລ້ງ 2020 ໂດຍປະສົມລະຫວ່າງ ແນວພັນສາລີເຂົ້າໜຽວພື້ນເມືອງ ກັບ ແນວພັນ ສາລີຈີນ. ໃຊ້ຮູບແບບປປັບປຸງພັນແບບປະສົມຂ້າມໂດຍກຳນົດເອົາສາລີຈີນເປັນຕົ້ນພໍ່ພັນ ແລະ ເອົາສາລີເຂົ້າໜຽວພື້ນເມືອງເປັນຕົ້ນແມ່(ສາລີຈີນເປັນສາລີທີ່ໃຫ້ຜັກສະໝ່ຳສະເໝີຜົນຜະລິດດີກິນແຊບຕະຫຼາດຕ້ອງການແຕ່ບໍ່ສາມາດເກັບເປັນແນວພັນປູກໃນລະດູການຕໍ່ໄປໄດ້; ສ່ວນສາລີເຂົ້າໜຽວພື້ນເມືອງລັກຊະນະລຳຕົ້ນກໍ່ບໍ່ສະໝ່ຳສະເໝີກິນກໍ່ຂ້ອນຂ້າງແຂງຕະຫຼາດບໍ່ຕ້ອງການ ແຕ່ວ່າມັນທົນຕໍ່ລ້ອງເຈາະລຳຕົ້ນໄດ້ ແລະ ກໍ່ສາມາດເກັບເປັນແນວພັນປູກໃນລະດູການຕໍ່ໄປໄດ້)ເຊິ່ງສາລີສອງແນວພັນນີ້ມີອາຍຸການເກັບກ່ຽວຂ້ອນຂ້າງຊ່ຳກັນດັ່ງນັ້ນ, ເຮົາຈິ່ງສາມາດປູກພ້ອມກັນໄດ້. ວິທີການປູກແມ່ນຈະປູກເປັນແຖວສັບກັນສຳລັບຕົ້ນແມ່ເມື່ອຮອດເວລາອອກດອກຜູ້ຫຼືກ່ອນມັນຈະພົ້ນອອກຕ້ອງໄດ້ຕັດຖິ້ມໝົດຮອງເພື່ອບໍ່ໃຫ້ເກສອນມາປົນຫຼືປະສົມຕົນເອງຈິ່ງເອົາໄວ້ແຕ່ເກສອນຕົ້ນຜູ້ທີ່ເຮົາກຳນົດໄວ້ແລ້ວໃຫ້ມັນປະສົມພັນກັນເອງໂດຍທຳມະຊາດແລ້ວລໍຖ້າໃຫ້ມັນແກ່ກໍ່ສາມາດເກັບເປັນແນວພັນປູກໃນລະດູການຕໍ່ໄດ້; ປະຈຸບັນແນວພັນພັນດັ່ງກ່າວໄດ້ທົດສອບການກິນເຫັນວ່າກິນແຊບອ່ອນນຸ້ມ,ຫວານ ເປັນທີ່ຕ້ອງການຂອງຕະຫຼາດ ແລະ ປູກຂະຫຍາຍຢູ່ພາຍໃນແຂວງ ແລະ ນຳໄປປູກທົດລອງຢູ່ແຂວງທີ່ມີກິດຈະກຳໂຮງຮຽນຊາວນາກໍ່ເຫັນວ່າເຂົາມີຄວາມສົນໃຈຫຼາຍ.

## ລັກສະນະເດັ່ນຂອງແນວພັນ ສາລີເຂົ້າໜຽວຄຳ 1



- ເໝາະກັບດິນ ຊາຍ, ຊາຍແກມຕົມ
- ປັບຕົວກັບສະພາບແວດລ້ອມໄດ້ດີ,
- ຜົນລິດດີ 6,5-7 ໂຕນ/ເຮັກຕາ
- ກິນອອ່ນ, ຫອມໜ້ອຍໜຶ່ງ

**ລັກຊະນະປະຈຳພັນຂອງສາລີເຂົ້າໜຽວຄຳ1**

| ລ/ດ | ຄຸນລັກຊະນະ ແລະ ຮູບປະກອບ | ລັກຊະນະປະຈຳພັນ |
|---|---|---|
| 1 | ສີລຳຕົ້ນອ່ອນ | ຂຽວ |
| 2 | ສີຂອງໃບອ່ອນ | **ຂຽວອ່ອນ** |
| 3 | ອາຍຸເຖິງອອກດອກ 50% | 35 |
| 4 | ອາຍຸອອກໄໝ 50% | 45 |
| 5 | ສີຂອງເກສອນຜູ້ | ເຫຼືອງອ່ອນ |
| 6 | ສີຂອງໄໝ | ສີທອງ |
| 7 | ສີລຳຕົ້ນ | ຂຽວ |
| 8 | ການແຕກແໜງ | 2 |
| 9 | ລັກຊະນະຂອງໃບ | ກວ້າງຍາວ |
| 10 | ອາຍຸເກັບຝັກສົດ | 65 |
| 11 | ອາຍຸເກັບເປັນເມັດພັນ | 80-85 |
| 12 | ຄວາມສູງຕົ້ນ ມ | 2,3 |
| 13 | ຄວາມສູງການຈັບຝັກ ມ | 0,6 |
| 14 | ປາຍຫຸ້ມຝັກ | ແຫຼມ |
| 15 | ຝັກມີປີກຫຼືບໍ່ມີ | ບໍ່ມີ |
| 16 | ຄວາມຍາວຂອງຝັກ ຊມ | 20 |
| 17 | ຄວາມກວ້າງຂອງຝັກ ຊມ | 4 |
| 18 | ຈຳນວນແຖວຕໍ່ຝັກ | 14 |

# ແນະນຳການປູກ



**ລະດູປູກ:**

**ສາມາດປູກໄດ້ 2 ລະດູ**

1. ຕົ້ນລະດູຝົນ
   ເດືອນ ເມສາ - ພຶດສະພາ
2. ທ້າຍລະດູຝົນ
   ເດືອນ ກໍລະກົດ - ສິງຫາ



## ການຕຽມດິນ

1.ໄຖ 1 ຄັ້ງ ເລິກ 20-30 ຊຕມ
ຕາກແດດ 7-10 ວັນ
2.ປັ່ນດິນໃຫ້ລະອຽດແລ້ວຍົກຮ່ອງ

## ການປູກ

1.ໄລຍະປູກ 25x75 ຊມ
2.ຂຸມລະ 1-2 ເມັດ
3.ໃຊ້ແນວພັນ 20 ກິໂລກຼາມ/ ເຮັກຕາ



## ການບົວລະບັດຮັກສາ

1.ກຳຈັດວັດສະພືດ 1 ຄັ້ງ ຫຼັງຈາກປູກໄດ້ 15-20 ວັນ ກ່ອນການໃສ່ຝຸ່ນ ຄັ້ງທີ່ 1
2.ຫຼັງຈາກກຳຈັດວັດສະພືດຄັ້ງທີ່ 1 ໃຊ້ຝຸ່ນເຄມີ 16-20-00 ຫຼື 15-15-15 ໃນອັດຕາ 250 ກກ/ເຮັກຕາ ແລະ ຝຸ່ນອິນຊີ 50ກຣາມ/ຂຸ່ມ, ໃສຝຸ່ນຄັ້ງທີ່ສອງ ຫລັງຈາກງອກໄດ້ 45ວັນ ໃສຝຸ່ນເຄມີ 46-00-00 ໃນອັດຕາ 50 ກກ/ເຮັກຕາ ໂຮຍຂ້າງແຖວປູກພອນດິນຖົມ

## ການເກັບກ່ຽວ

ເກັບຜັກສົດເມື່ອໝາກສາລີມີອາຍຸ 65-70 ວັນ ຫຼື ຈະສັງເກດເບິ່ງໃໝສາລີ ຍຸມ4-5ວັນ ກໍ່ສາມາດເກັບກ່ຽວໄດ້, ຖ້າເຮັດແນວພັນ ຕ້ອງປະໃຫ້ສາລີແກ່ຈົນຜັກ ຫຼື ຕົ້ນແຫ້ງ ເປັນສີເຫຼືອງຈິ່ງສາມາດເກັບກ່ຽວໄດ້

**ຕິດຕໍ່ປະສານແນວພັນ**

**ທ່ານ ຄຳມີໄຊ ຈັນທະລາ**

**ໂທ: 0309473942**